# ການລົງທະບຽນໃນມື້ເລືອກຕັ້ງ

VOTE 2026

*ເພື່ອລົງທະບຽນຢູ່ສະຖານທີ່ເລືອກຕັ້ງຂອງທ່ານໃນວັນເລືອກຕັ້ງ, ໃຫ້ຖືເອກະສານຫຼັກຖານຢັ້ງຢືນທີ່ຢູ່ໜຶ່ງລາຍການທີ່ລະບຸໄວ້ຂ້າງລຸ່ມນີ້ມານຳ.*

## ① *ບັດປະຈຳຕົວທີ່ມີຊື່ ແລະ ທີ່ຢູ່ປັດຈຸບັນ*

- ໃບອະນຸຍາດຂັບຂີ່, ໃບອະນຸຍາດຮຽນຂັບຂີ່ ຫຼື ບັດປະຈຳຕົວຂອງລັດ Minnesota ທີ່ຍັງມີຜົນບັງຄັບໃຊ້ໄດ້ ຫຼື ໃບຮັບເງິນສຳລັບເອກະສານໃດໜຶ່ງເຫຼົ່ານີ້.
- ບັດປະຈຳຕົວຊົນເຜົ່າທີ່ມີຊື່, ທີ່ຢູ່, ຮູບຖ່າຍ ແລະ ລາຍເຊັນ.

## ② *ບັດປະຈຳຕົວທີ່ຕິດຮູບຖ່າຍບວກກັບເອກະສານທີ່ມີຊື່ ແລະ ທີ່ຢູ່ປັດຈຸບັນຂອງທ່ານ*

### ບັດປະຈຳຕົວທີ່ຕິດຮູບຖ່າຍທີ່ໄດ້ຮັບການອະນຸມັດ

*ເລືອກໜຶ່ງລາຍການ. ສາມາດໝົດອາຍຸໄດ້.*

ໃບອະນຸຍາດຂັບຂີ່, ບັດປະຈຳຕົວຂອງລັດ ຫຼື ໃບອະນຸຍາດຮຽນຂັບຂີ່ທີ່ລັດໃດໜຶ່ງອອກໃຫ້

ໜັງສືຜ່ານແດນສະຫະລັດ

ບັດປະຈຳຕົວທະຫານ ຫຼື ນັກຮົບເກົ່າສະຫະລັດ

ບັດປະຈຳຕົວຊົນເຜົ່າທີ່ມີຊື່, ລາຍເຊັນ ແລະ ຮູບຖ່າຍ

ບັດປະຈຳຕົວມະຫາວິທະຍາໄລ, ວິທະຍາໄລ ຫຼື ວິທະຍາໄລເຕັກນິກໃນລັດ Minnesota

ບັດປະຈຳຕົວໂຮງຮຽນມັດທະຍົມຕອນປາຍໃນລັດ Minnesota

### ເອກະສານຕ່າງໆທີ່ໄດ້ຮັບການອະນຸມັດ

*ເລືອກໜຶ່ງລາຍການ. ສາມາດສະແດງໃນອຸປະກອນເອເລັກໂຕນິກໄດ້.*

ໃບບິນ, ບັນຊີ ຫຼື ໃບແຈ້ງກ່ຽວກັບການເລີ່ມການບໍລິການ ທີ່ຮອດເວລາຕ້ອງຈ່າຍ ຫຼື ລົງວັນທີພາຍໃນ 30 ມື້ ກ່ອນການເລືອກຕັ້ງສຳລັບ:

* ໂທລະສັບ, ໂທລະພາບ ຫຼື ອິນເຕີເນັດ
* ຂີ້ເຫຍື້ອມູນຝອຍ, ລະບົບລະບາຍນ້ຳເສຍ, ໄຟຟ້າ, ແກັດສ໌ ຫຼື ນ້ຳ
* ບັດທະນາຄານ ຫຼື ບັດເຄຣດິດ
* ຄ່າເຊົ່າ ຫຼື ເງິນສິນເຊື່ອເຮືອນ

ສັນຍາເຊົ່າທີ່ຢູ່ອາໄສ ຫຼື ສັນຍາເຊົ່າທີ່ມີຜົນບັງຄັບໃຊ້ຈົນຮອດວັນເລືອກຕັ້ງ

ໃບຢັ້ງຢືນຄ່າທຳນຽມນັກສຶກສາໃນປັດຈຸບັນ

*ສືບຕໍ່ຢູ່ດ້ານຫຼັງ...*

**ສຳນັກງານເລຂາທິການລັດ Minnesota**

*mnvotes.gov • ໂທ: 1-877-600-VOTE • ຂໍ້ຄວາມ: 651-217-3862*

# ການລົງທະບຽນໃນມື້ເລືອກຕັ້ງ

VOTE 2026

## ③ *ຜູ້ມີສິດເລືອກຕັ້ງທີ່ລົງທະບຽນແລ້ວ ສາມາດຢືນຢັນທີ່ຢູ່ຂອງທ່ານໄດ້*

ຜູ້ມີສິດເລືອກຕັ້ງທີ່ລົງທະບຽນແລ້ວຈາກເຂດເລືອກຕັ້ງຂອງທ່ານ ສາມາດໄປກັບທ່ານໄປຍັງສະຖານທີ່ເລືອກຕັ້ງເພື່ອລົງລາຍເຊັນໃສ່ຄໍາສາບານຢືນຢັນທີ່ຢູ່ຂອງທ່ານໄດ້. ນີ້ເອີ້ນວ່າ ‘ການຮັບຮອງ.’ ຜູ້ມີສິດເລືອກຕັ້ງທີ່ລົງທະບຽນແລ້ວສາມາດຮັບຮອງຜູ້ມີສິດເລືອກຕັ້ງໄດ້ສູງສຸດແປດຄົນ. ທ່ານບໍ່ສາມາດໃຫ້ການຮັບຮອງໃຫ້ແກ່ຄົນອື່ນໄດ້ ຖ້າມີບຸກຄົນໃດໜຶ່ງເປັນຜູ້ຮັບຮອງໃຫ້ທ່ານ.

## ④ *ບັດປະຈໍາຕົວທີ່ຕິດຮູບຖ່າຍພ້ອມບັນຊີລາຍຊື່ທີ່ພັກນັກສຶກສາ*

ບັນດາວິທະຍາໄລ ແລະ ມະຫາວິທະຍາໄລທີ່ຮັບບັນດານັກສຶກສາທີ່ໄດ້ຮັບການຊ່ວຍເຫຼືອດ້ານການເງິນຂອງລັດຕ້ອງໄດ້ສົ່ງບັນຊີລາຍຊື່ທີ່ພັກນັກສຶກສາໃຫ້ເຈົ້າໜ້າທີ່ເລືອກຕັ້ງ. ບັນຊີລາຍຊື່ນີ້ລວມມີນັກຮຽນທີ່ອາໄສຢູ່ໃນວິທະຍາເຂດ ແລະ ຜູ້ທີ່ໄດ້ໃຫ້ທີ່ຢູ່ປັດຈຸບັນຂອງຕົນແກ່ໂຮງຮຽນ ແລະ ອາໄສຢູ່ໃນເມືອງທີ່ວິທະຍາເຂດຕັ້ງຢູ່. ຖ້າທ່ານຢູ່ໃນບັນຊີລາຍຊື່ນີ້, ໃຫ້ສະແດງບັດປະຈໍາຕົວທີ່ຕິດຮູບຖ່າຍປະເພດໃດໜຶ່ງທີ່ໄດ້ລະບຸໄວ້ໃນຂັ້ນຕອນທີ 2 ເພື່ອດໍາເນີນການລົງທະບຽນໃຫ້ສໍາເລັດ.

## ⑤ *ການລົງທະບຽນທີ່ມີຜົນໃຊ້ໄດ້ໃນເຂດເລືອກຕັ້ງ*

ຖ້າທ່ານໄດ້ລົງທະບຽນຢູ່ໃນເຂດເລືອກຕັ້ງແລ້ວ ແຕ່ໄດ້ປ່ຽນຊື່ ຫຼື ໄດ້ຍ້າຍໄປຢູ່ບ່ອນໃໝ່ພາຍໃນເຂດເລືອກຕັ້ງດຽວກັນ, ທ່ານພຽງແຕ່ຕ້ອງໄດ້ບອກຊື່ ຫຼື ທີ່ຢູ່ເກົ່າຂອງທ່ານໃຫ້ຄະນະກໍາມະການການເລືອກຕັ້ງຮູ້ເທົ່ານັ້ນ.

## ⑥ *ແຈ້ງການກ່ຽວກັບການລົງທະບຽນຊ້າ*

ຖ້າທ່ານລົງທະບຽນເລືອກຕັ້ງພາຍໃນ 20 ມື້ກ່ອນການເລືອກຕັ້ງ, ທ່ານອາດຈະໄດ້ຮັບແຈ້ງການກ່ຽວກັບການລົງທະບຽນຊ້າທາງໄປສະນີ. ຖືແຈ້ງການນີ້ມານໍາ ແລະ ໃຊ້ເປັນເອກະສານຫຼັກຖານຢັ້ງຢືນທີ່ຢູ່ຂອງທ່ານ ເພື່ອລົງທະບຽນ.

## ⑦ *ພະນັກງານປະຈໍາສະຖານດູແລຜູ້ສູງອາຍຸ*

ຖ້າທ່ານອາໄສຢູ່ໃນສະຖານດູແລຜູ້ສູງອາຍຸ, ພະນັກງານຈະສາມາດໄປກັບທ່ານໄປຍັງສະຖານທີ່ເລືອກຕັ້ງເພື່ອຢືນຢັນທີ່ຢູ່ຂອງທ່ານ. ນີ້ເອີ້ນວ່າ ‘ການຮັບຮອງ.’ ພະນັກງານສາມາດຮັບຮອງຜູ້ມີສິດເລືອກຕັ້ງທຸກຄົນທີ່ອາໄສຢູ່ໃນສະຖານດູແລຜູ້ສູງອາຍຸດັ່ງກ່າວໄດ້.